# ຄວາມຮັກ

ໂດຍ ະສາວຫຼັກ 7 ເມັດນ້ຳຕານເມືອງສວັນ

ຄວາມຮັກແສນຊາບຊຶ້ງ ທັງດຶງດູດຄວາມຫວານ
ສຸດເບີກບານອຸຣາ ຍາກຊິຫາທຽມໄດ້
ຮັກເປັນກຳລັງໃຈໃຫ້ ເຕັມໄປດ້ວຍຄວາມຫ່ວງ
ດວງໃຈທີ່ຍຶດໝັ້ນ ບໍ່ຜັນປີ້ນປ່ຽນແປງ

ມອງທ້ອງຟ້າຊິແຈ້ງ ເຫັນທາງແຫ່ງຄວາມສຸກ
ທຸກແຕ່ພຽງໄກກາຍ ແຕ່ວ່າໃຈກົມກ້ຽວ
ໃຈໜ່ວຍດຽວປອງໝັ້ນ ສັນຍາກັນແນ້ອແນ່
ນັ້ນຄືຄວາມຮັກແທ້ ບໍ່ແປປີ້ນປ່ຽນສລາຍ ທ່ານເອີຍ

ຄວາມຮັກອ້າຍແລະນ້ອງ ເຄີຍປອງຮ່ວມສາຍຄາ
ຊາຕາກັມມັນສຸດແສນ ບໍ່ແມ່ນແນນຈາກເມືອງຟ້າ
ສ່ວນວ່າກາຍາຕ້ອງ ເຮົາສອງໄດ້ເຫີນຫ່າງ
ຕ່າງຄົນກໍຜູກໝັ້ນ ພັນກ້ຽວຢາກຮ່ວມກັນ ອ້າຍເອີຍ

ສັມພັນຮັກແໜ້ນແຟ້ນ ແສນຫາຍາກໜັກໜາ
ຮັກນີ້ຄວນບູຊາ ຄ່າສູງພຽງຟ້າ
ໃຜໄດ້ມານອນຊ້ອນ ຮຽງໝອນໃຫ້ຮັກແກ່ນ ກັນເດີ
ແນນບໍ່ໄດ້ຮ່ວມຫ້ອງ ຄືນ້ອງນັ່ງຢູ່ໃຈ ອ້າຍແລ້ວ

ນ້ອງນີ້ ປາຖນາຢາກໄດ້ ພຽງຄັ້ງນຶ່ງໃນຄວາມຮັກ
ສລັກລົງໃນດວງໃຈ ໃຫ້ຄ່າສູງສເມີດ້ານ

ຮັກມີຫຼາຍທາງຫ້າມ    ກຳແພງໜາມຈາກພໍ່ແມ່ ກໍມີດາຍ
ແຕ່ຄວາມຮັກທີ່ທ່ຽງແທ້    ບໍ່ແປປີ້ນປ່ຽນແປງ

ຮັກບໍ່ສົມມາດແມ້ງ    ສວັນແຕ່ງລິຂິດ
ບໍ່ໄດ້ຊິດກາຍຊາຍ    ແຕ່ສ່ວນໃຈຖຸນອມໄວ້
ໃຈທັງສອງຄຽງຂ້າງ    ຢ່າເລືອນລາງເຫີນຫ່າງ
ຫວັງຮ່ວມນາງບໍ່ໄດ້    ຢ່າໄລຂ້າງຫ່າງລາ

ຄືດວ່າ ຄວາມຮັກ ນັ້ນ    ສົມພັນໃຫຍ່ຄືດວງຈິດ
ບໍ່ມີໃຜລິຂິດ    ຂີດຂຽນເອົາໄວ້
ຖ້າວ່າໃຈປະສົງຕັ້ງ    ພະລັງແຮງຢາກຄຽງຄູ່
ຮັກຢູ່ຄົນລະຟາກຟ້າ    ມາຄຽງຂ້າງຄູ່ໃຈ    ອ້າຍເອີຍ

**Love is forever**

ໂດຍະ ສາວຫຼັກ 7 ເມັດນ້ຳຕານເມືອງສວັນ